ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ...646.....
ວັນທີ...23 JUN 2015
ໂທລະສັບ 021 217770

ເລກທີ: 24 /ທຫ

ນະຄອນຫຼວງວຽງຈັນ, ວັນທີ: 22 JUN 2015

**ລາຍງານການເຄື່ອນໄຫວປະຈຳອາທິດ**

**ທີ 08/06/2015 ຫາ 12/06/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 02/06/2015 | ອາທິດນີ້ 09/06/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---:|---:|---:|
| ເອີໂຣ/ ໂດລາ | 1,0942 | 1,1290 | -3,08% |
| ໂດລາ/ເຢນ | 124,66 | 124,44 | 0,18% |
| ໂດລາ/ບາດ | 33,77 | 33,73 | 0,09% |
| ໂດລາ/ເປໂຊ | 44,65 | 45,02 | -0,83% |
| ໂດລາ/ຣູເປັຍ | 13.220,00 | 13.330,78 | -0,83% |
| ໂດລາ/ໂດລາສິງກະໂປ | 1,3551 | 1,3536 | 0,11% |
| ໂດລາ/ຢວນ | 6,1981 | 6,2048 | -0,11% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 2,88% ຈາກ 60,67 ໂດລາ/ບາເຣວ ມາເປັນ 58,92 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,89% ຈາກ 1.187,39 ໂດລາ/ອອນ ມາເປັນ 1.176,82 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,06% ທັງອັດຕາ ທທກ ແລະ ອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,21% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 1,39% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,54% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,19% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,93% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 4,04% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 02/06/2015 | | | ອາທິດນີ້ 09/06/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.100,88 | 8.134,13 | 8.116,79 | 8.102,25 | 8.134,81 | 8.121,74 | -0,02% | -0,01% | -0,06% |
| ບາດ | 243,06 | 243,87 | 243,59 | 242,28 | 243,30 | 243,08 | 0,32% | 0,23% | 0,21% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.100,88 | 8.134,13 | 8.116,79 | 8.110,48 | 8.139,94 | 8.126,56 | -0,03% | -0,06% | -0,06% |
| ບາດ | 243,06 | 243,87 | 243,59 | 241,41 | 242,53 | 241,82 | 1,19% | 1,47% | 1,39% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,09% | 0,01% | 0,06% | 0,10% | 0,06% | 0,06% | | | |
| ບາດ | 0,50% | 0,91% | 0,65% | -0,36% | -0,32% | -0,52% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 1,09% ທຽບໃສ່ວັນທີ 05/06/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 36,28%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,37% ເມື່ອທຽບໃສ່ວັນທີ 05/06/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 20,84%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 08/06/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 13,28 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 57,93 ລ້ານໂດລາ ແລະ ຂາຍໂດລາໄດ້ 44,66 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.118,01 ລ້ານບາດ (ໃນນີ້ ຊື້ບາດໄດ້ 347,69 ລ້ານບາດ ແລະ ຂາຍບາດໄດ້ 1.465,69 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 54,89% ແລະ ຫຼຸດລົງ 15,79% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 9,58 ລ້ານໂດລາ ແລະ ເງິນບາດມີຈຳນວນ 252,43 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 2,44 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 688,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 37,61 ລ້ານໂດລາ ແຕ່ ຊື້ບາດໄດ້ສຸດທິ ຈຳນວນ 1.265,88 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 02/06/2015 | | ອາທິດທີ 08/06/2015 | | (%) +ເພີ່ມຂື້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 47,79 | 171,36 | 22,63 | 190,26 | -52,63% | 11,03% |
| - ທ/ຄທຸລະກິດອື່ນໆ | 47,79 | 403,52 | 35,30 | 157,42 | -26,13% | -60,99% |
| ລວມຊື້: | **95,57** | **574,88** | **57,93** | **347,69** | **-39,38%** | **-39,52%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 34,56 | 291,70 | 31,69 | 252,03 | -8,29% | -13,60% |
| - ທ/ຄທຸລະກິດອື່ນໆ | 97,28 | 1.286,85 | 12,97 | 1.213,67 | -86,67% | -5,69% |
| ລວມຂາຍ: | **131,83** | **1.578,55** | **44,66** | **1.465,69** | **-66,13%** | **-7,15%** |
| ຊື້-ຂາຍສຸດທິ ທທກ | -36,26 | -1.003,67 | 13,28 | -1.118,01 | -136,61% | 11,39% |
| ຜິດດ່ຽງ ຊື້-ຂາຍ | -37,94 | -174,59 | 22,92 | -321,56 | 608,06% | -146,92% |
| ມູນຄ່າການຊື້-ຂາຍ | 227,41 | 2.153,43 | 102,59 | 1.813,38 | -54,89% | -15,79% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 31,80 | 28,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 40,25 | 573,00 | 25,56 | 688,00 | | |
| ຊື້-ຂາຍສຸດທິ ທຫລ | **-40,25** | **-541,20** | **2,44** | **-688,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **7,90** | **231,38** | **9,58** | **252,43** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,13 | 1.419,91 | 0,39 | 1.265,88 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 42,32 | 0,00 | 38,01 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-42,19** | **1.419,91** | **-37,61** | **1.265,88** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 06/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,21% ເພີ່ມຂຶ້ນ 0,02% ຈາກ 1,19% ໃນເດືອນ 05/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 133,1 ລ້ານໂດລາ ສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 2% ທຽບໃສ່ອາທິດຜ່ານມາ.

## 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 706 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 17,81% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 712,33 ຕື້ກີບ ຫຼຸດລົງ 0,29% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (05-11/06/2015) ມີຈຳນວນ 1.731 ຄັ້ງ ໂດຍມີມູນຄ່າ 514,42 ຕື້ກີບ ເພີ່ມຂຶ້ນ 51,11% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 441 ຄັ້ງ.

## 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.382,97 ຈຸດ ເພີ່ມຂຶ້ນ 0,67% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 827.574 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 4,32 ຕື້ກີບ ເພີ່ມຂຶ້ນ 116,10% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 53,93% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.096 ກີບ/ຮຸ້ນ ເພີ່ມຂຶ້ນ 18 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 77.543 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 472,70 ລ້ານກີບ ເພີ່ມຂຶ້ນ 93,85% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 45,52% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,68%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.047 ກີບ/ຮຸ້ນ ຫຼຸດລົງ 63 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 333.031 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,34 ຕື້ກີບ ເພີ່ມຂຶ້ນ 34,10% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 61,30% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.900 ກີບ/ຮຸ້ນ ຫຼຸດລົງ 1,25% ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.600 ກີບ/ຮຸ້ນ ຫຼຸດລົງ 131 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 417.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,50 ຕື້ກີບ ເພີ່ມຂຶ້ນ 27.474,30% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 10% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ: ❶ການຮ່ວມມືດ້ານຕະຫຼາດທຶນຂອງ ຄຄຊ 5 ປະເທດເຂດອ່າງແມ່ນ້ຳຂອງ (MCMC) ຄັ້ງທີ 5 ທີ່ແຂວງຫຼວງພະບາງ, ❷ກອງປະຊຸມເປີດກວ້າງປຶກສາຫາລືຮ່າງຄຳແນະນຳ ວ່າດ້ວຍການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (STR) ຮ່ວມກັບບັນດາທະນາຄານທຸລະກິດ, ສະຖາບັນການເງິນ, ບໍລິສັດປະກັນໄພ ແລະ ບໍລິສັດຫຼັກຊັບ, ທີ່ ໂຮງແຮງລ້ານຊ້າງ, ❸ກອງປະຊຸມຄົ້ນຄວ້າປຶກສາຫາລືກ່ຽວກັບຄຳແນະນຳວ່າດ້ວຍການແຈ້ງເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນໃນເວລາເຂົ້າ-ອອກ ສປປ ລາວ ທີ່ ທຫລ;
- ສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບ: ❶ການກະກຽມການເປັນເຈົ້າພາບກອງປະຊຸມອາຊຽນ ແລະ ອາຊຽນ+3 ຂະແໜງການທະນາຄານ ທີ່ ທຫລ, ❷"2nd School Development Plan" ຢູ່ກົມອະຊີວະສຶກສາ, ກະຊວງສຶກສາ ແລະ ກິລາ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສຳເລັດການຈັດຝຶກອົບຮົມແລກປ່ຽນບົດຮຽນ ກັບທະນາຄານກາງກຳປູເຈຍ ກ່ຽວກັບວຽກງານນິຕິກຳ ແລະ ການຄຸ້ມຄອງສະຖາບັນການເງິນ ທີ່ສະຖາບັນການທະນາຄານ;

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຍຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ຄົ້ນຄວ້າລະບຽບວ່າດ້ວຍ Financial Service provider ກ່ຽວກັບສະຖາບັນການເງິນ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ກະກຽມການເຂົ້າຮ່ວມກອງປະຊຸມຄົບຄະນະຄັ້ງທີ 3 ສະໄໝທີ 26 ແລະ ກອງປະຊຸມກຸ່ມເຮັດວຽກຂອງອົງການ FATF (3 FATF Plenary and working group meeting for FATF-XXIV) ທີ່ເມືອງບຣິສເບີນ ປະເທດອົດສະຕາລີ;
- ກະກຽມການຄັດເລືອກຜົນງານ 10 ປີ ຂອງກົມກອງ ແລະ ບຸກຄົນ (2005-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພົມມະກອນ